## ການຮ່ວມມື

ກປສ ໄດ້ເລີ້ມຕົ້ນຮ່ວມມືກັບ ທະນາຄານພັດທະນາອາຊີ ເພື່ອສ້າງຕົ້ນທຶນໃຫ້ແກ່ ກປສ ແລະ ຈາກທະນາຄານໂລກ, ໃນການສະໜັບສະ ໜູນ ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວ.

ກປສ ຍັງໄດ້ສືບຕໍ່ຮ່ວມມືກັບ ອົງການຈັດຕັ້ງສາກົນ ໃນການຈັດຕັ້ງ ວຽກງານປົກປັກຮັກສາສິ່ງແວດລ້ອມຢູ່ ສປປລາວ. ທຸກພາກສ່ວນທີ່ສົນໃຈນຳ ກປສ ສາມາດຕິດຕໍ່ເອົາເອກະສານໄດ້ຈາກ ກປສ ຫຼື ຈາກເວບໄຊຂອງພວກເຮົາ.



## ການຂໍທຶນສະໜັບສະໜູນ

ທຸກພາກສ່ວນທີ່ຕ້ອງການ ການສະໜັບສະໜູນທຶນຮອນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ, ສາມາດປະກອບຄຳຮ້ອງຕາມ ແບບຟອມມາດຕະຖານ, ຊຶ່ງຕິດຕໍ່ເອົາໄດ້ຈາກສຳນັກງານ ກປສ. ທຸກພາກສ່ວນທີ່ສົນໃຈນຳ ກປສ ສາມາດຕິດຕໍ່ ເອົາເອກະສານໄດ້ຈາກສຳນກງານ ກປສ ແລະ ເວບໄຊຂອງພວກເຮົາ.

## ບ່ອນຕິດຕໍ່


ສຳນັກງານຂອງ ກປສ

ຕູ້ ປນ: 7647<br>
ຊັ້ນ 3, ຕຶກ ອອຕສ, ຖະໜົນສີດຳດວນ<br>
ສຳນັກງານນາຍົກລັດຖະມົນຕີ<br>
ນະຄອນຫຼວງວຽງຈັນ<br>
ໂທ: 856-21 252739<br>
ແຟັກ: 856-21 252741<br>
ເວບໄຊ: http://www.laoepf.org.la


ເພື່ອໄດ້ຂໍ້ມູນເພີ້ມເຕີມ,
ກະລຸນາເຂົ້າໄປທີ່ເວບໄຊຂອງພວກເຮົາ

http://www.laoepf.org.la

# ກອງທຶນປົກປັກຮັກສາສິ່ງແວດລ້ອມ

## Environmental Protection Fund



http://www.laoepf.org.la

## ຈຸດປະສົງ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ສ້າງຕັ້ງຂຶ້ນໃນປີ 2005 ໃນຖານະເປັນອົງການທີ່ກຸ້ມຕົນເອງ ທາງດ້ານການເງິນ ເພື່ອປັບປຸງການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການຄຸ້ມຄອງຊີວະນາໆພັນ ແລະ ການພັດທະນາຊຸມຊົນ ຢູ່ໃນ ສປປ ລາວ.

## ການຈັດຕັ້ງ

- ກປສ ປະກອບດ້ວຍ:

1. ສະພາບໍລິຫານ
2. ຫ້ອງການບໍລິຫານ

ສະພາບໍລິຫານ ກປສ ມີພາລະບົດບາດຮັບຜິດຊອບລວມໃນການຊຸກຍູ້ການເຄື່ອນໄຫວຂອງ ກປສ ໃຫ້ບັນລຸຕາມຈຸດປະສົງ ແລະ ປະກອບດ້ວຍຜູ້ຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ອຳນາດການປົກຄອງທ້ອງຖິ່ນ, ສະພາການຄ້າ ແລະ ອຸດສາຫະກຳ, ສະຖາບັນຄົ້ນຄວ້າ ແລະ ອົງການຈັດຕັ້ງສັງຄົມ ໂດຍມີຮອງນາຍົກລັດຖະມົນຕີເປັນປະທານ, ມີຮອງປະທານ 2 ທ່ານ ແລະ ສະມາຊິກ 8 ທ່ານ.

ຫ້ອງການບໍລິຫານ ກປສ ເປັນເສນາທິການຊ່ວຍສະພາບໍລິຫານໃນການຄຸ້ມຄອງບໍລິຫານກອງທຶນ, ປະກອບດ້ວຍຜູ້ອຳນວຍການທີ່ຖືກແຕ່ງຕັ້ງໂດຍ ສະພາບໍລິຫານ, ແລະ ຫ້ອງການປະກອບດ້ວຍ, ໜ່ວຍງານການເງິນ ແລະ ບໍລິຫານ, ໜ່ວຍງານປະຕິບັດງານໂຄງການຍ່ອຍ, ໜ່ວຍງານຂໍ້ມູນຂ່າວສານ, ໜ່ວຍງານຕິດຕາມກວດກາ ແລະ ຕີລາຄາໂຄງການຍ່ອຍ.

## ການດຳເນີນງານ

ກປສ ມີແຫຼ່ງທຶນ ແລະ ລາຍຮັບຈາກ:

-ການຊ່ວຍເຫຼືອລ້າ, ການກູ້ຢືມຈາກພາຍໃນ ແລະ ຕ່າງປະເທດ;

-ງົບປະມານຂອງລັດ;

-ໂຄງການພັດທະນາ ແລະ ກິດຈະການຕ່າງໆ;

-ການປະກອບສ່ວນຂອງພາກສ່ວນເສດຖະກິດ ແລະ ບຸກຄົນທົ່ວໄປ;

-ດອກເບ້ຍ ຫຼື ຜົນກຳໄລທີ່ເກີດຈາກກອງທຶນ.





ກປສ ຈະສະໜອງທຶນຮອນໃນຮູບແບບ:

ການຊ່ວຍເຫຼືອລ້າ, ເງິນກູ້ອັດຕາດອກເບ້ຍຕ່ຳ, ການຖົມຊຸມອັດຕາດອກເບ້ຍ ຫຼື ການຊ່ວຍເຫຼືອແບບປະສົມປະສານ.

ແຫຼ່ງທຶນຂອງ ກປສ ຈະຖືກນຳໃຊ້ເພື່ອສະໜອງທຶນໃຫ້ແກ່ການໃຊ້ຈ່າຍບໍລິຫານ ແລະ ການໃຊ້ຈ່າຍປະຈຳຂອງກະຊວງ, ກົມ, ອົງການ ແລະ ອົງການພາກລັດ ແລະ ເອກະຊົນທີ່ໄດ້ຮັບການສະໜັບສະໜູນທຶນຮອນຈາກ ກປສ ກໍຕໍ່ເມື່ອຄ່າໃຊ້ ຈ່າຍດັ່ງກ່າວ ຕິດພັນໂດຍກົງກັບການຈັດຕັ້ງປະຕິບັດວຽກງານ ທີ່ໄດ້ຮັບການສະໜັບສະໜູນຈາກ ກປສ.

ບຸກຄົນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງຂອງລັດ ຫຼື ສັງຄົມ, ສາມາດຮ້ອງຂໍການສະໜັບສະໜູນດ້ານທຶນຮອນຈາກ ກປສ, ວຽກງານທີ່ສາມາດໄດ້ຮັບການສະໜັບສະໜູນນັ້ນຕ້ອງສອດຄ່ອງກັບດຳລັດ ວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ, ກປສ ຈະບໍ່ໃຫ້ການຊ່ວຍເຫຼືອບໍ່ວ່າໃນຮູບແບບໃດໆ ເຂົ້າໃນເປົ້າໝາຍການຫຼຸດຜ່ອນຄວາມເສຍຫາຍ ຫຼື ທົດແທນຄ່າເສຍຫາຍ ທີ່ເກີດຈາກຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການພັດທະນາຕ່າງໆ ນອກຈາກວ່າເປັນວຽກງານທີ່ມີສິດໄດ້ຮັບການສະໜັບສະໜູນຈາກ ກປສ.

ກປສ ຈະເຜີຍແຜ່ຂ່າວສານກ່ຽວກັບການເຄື່ອນໄຫວຂອງ ກປສ, ລາຍຊື່ໂຄງການ ແລະ ກິດຈະການທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນຈາກ ກປສ ແລະ ບົດລາຍງານວຽກງານການເງິນ ແລະ ການເຄື່ອນໄຫວວຽກງານປະຈຳປີ, ລວມທັງເຜີຍແຜ່ເປັນພາສາລາວ ແລະ ພາສາອັງກິດ ຜ່ານລະບົບເວບໄຊຂອງ ກປສ.

